# ອະນຸສັນຍາ
# ວ່າດ້ວຍການແລກປ່ຽນສິນຄ້າເຄື່ອງຂອງ
# ຂອງພົນລະເມືອງ
# ທີ່ຕັ້ງພູມລຳເນົາຢູ່ເຂດຊາຍແດນລາວ-ຫວຽດນາມ
# ລະຫວ່າງ
# ລັດຖະບານ ແຫ່ງ ສປປລາວ
# ແລະ
# ລັດຖະບານ ແຫ່ງ ສສ ຫວຽດນາມ

*******************

ລັດຖະບານ ສປປລາວ ແລະ ລັດຖະບານ ສສ.ຫວຽດນາມ:

ອີງຕາມສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສປປລາວ ແລະ ສສ.ຫວຽດນາມ ທີ່ໄດ້ລົງນາມຮ່ວມກັນ ເມື່ອວັນທີ 18 / 7 / 1977;

ອີງຕາມສົນທິສັນຍາວ່າດ້ວຍການກຳນົດເສັ້ນຊາຍແດນ ສປປລາວ ແລະ ສສ.ຫວຽດນາມ ທີ່ໄດ້ລົງນາມເມື່ອວັນທີ 18/7/1977 ແລະ ສົນທິສັນຍາເພີ້ມເຕີມສົນທິສັນຍາວ່າດ້ວຍການກຳນົດເສັ້ນຊາຍແດນປະເທດ ລະຫວ່າງ ສອງປະເທດທີ່ໄດ້ລົງນາມເມື່ອວັນທີ 24/1/1986;

ອີງຕາມສັນຍາວ່າດ້ວຍລະບຽບຊາຍແດນປະເທດ ລະຫວ່າງ ສປປລາວ ແລະ ສສ.ຫວຽດນາມ ທີ່ໄດ້ລົງນາມ ວັນທີ 01/ 3 /1990;

ອີງຕາມສັນຍາວ່າດ້ວຍການຮ່ວມມືເສດຖະກິດ-ວັດທະນະທຳ, ວິທະຍາສາດ-ເຕັກນິກ ລະຫວ່າງ ລັດຖະບານ ແຫ່ງ ສປປລາວ ແລະ ລັດຖະບານ ແຫ່ງ ສສ.ຫວຽດນາມ ປີ 1992 ແລະ ໄລຍະປີ 1992-95 ທີ່ໄດ້ລົງນາມເມື່ອວັນທີ 15/2/ 1992;

ແນໃສ່ເພື່ອສ້າງຄວາມສະດວກໃຫ້ແກ່ພົນລະເມືອງ ເຊິ່ງອາໃສຢູ່ຕາມເຂດຊາຍແດນ ຂອງ ສປປລາວ ແລະ ຂອງ ສສ.ຫວຽດນາມ ທີ່ຂ້າມຊາຍແດນໄປມາແລກປ່ຽນສິນຄ້າເຄື່ອງຂອງອັນຈຳເປັນເພື່ອແກ້ໄຂຊີວິດການເປັນຢູ່ປະຈຳວັນ, ຮັບໃຊ້ການຜະລິດ, ຢ້ຽມຢາມຍາດພີ່ນ້ອງໂດຍໃຫ້ສອດຄ່ອງກັບຮີດຄອງປະເພນີ ແລະ ການພົວພັນມິດຕະພາບແບບພິເສດ ລະຫວ່າງ ລາວ ແລະ ຫວຽດນາມ;

ໄດ້ຕົກລົງເຊັນອະນຸສັນຍາ ວ່າດ້ວຍການແລກປ່ຽນສິນຄ້າເຄື່ອງຂອງໆພົນລະເມືອງທີ່ຕັ້ງພູມລຳເນົາຢູ່ເຂດຊາຍແດນລາວ-ຫວຽດນາມດັ່ງລຸ່ມນີ້ :

## ມາດຕາ 1

ພົນລະເມືອງທີ່ຕັ້ງພູມລຳເນົາຢູ່ຕາມໝູ່ບ້ານ (ຫລືທຽບເທົ່າ) ຂອງລາວ ແລະ ຢູ່ຕາມ ຕາແສງ (ຫລືທຽບເທົ່າ) ຂອງຫວຽດນາມລຽບຕາມເສັ້ນຊາຍແດນສອງປະເທດ. ເວລາຂ້າມຊາຍແດນໄປມາເພື່ອແລກປ່ຽນສິນຄ້າ ແລະ ໃຫ້ເຄື່ອງຝາກຂອງຕ້ອນໂດຍສອດຄ່ອງກັບລະບຽບກົດໝາຍຂອງແຕ່ລະປະເທດນັ້ນ ຕ້ອງຜ່ານປະຕູດ່ານທາງການຂອງສອງລັດຖະບານກຳນົດ ຫລືປະຕູດ່ານສຳຮອງ ຊຶ່ງແມ່ນອຳນາດການປົກຄອງຂັ້ນແຂວງຊາຍແດນຂອງສອງປະເທດໄດ້ກຳນົດ ແລະ ຕ້ອງມີບັດປະຈຳຕົວ ຫລື ໃບຢັ້ງຢືນທີ່ຢູ່ຕິດຕາມໄປພ້ອມ.

## ມາດຕາ 2

ສິນຄ້າເຄື່ອງຂອງທີ່ແລກປ່ຽນຢູ່ຕາມເຂດຊາຍແດນ ຈະໄດ້ຮັບອະນຸຍາດຍົກເວັ້ນພາສີຂາອອກ-ຂາເຂົ້າ ຕ້ອງແມ່ນສິນຄ້າເຄື່ອງຂອງທີ່ຈຳເປັນແກ່ຊີວິດການເປັນຢູ່ປະຈຳວັນຂອງປະຊາຊົນເຊິ່ງບໍ່ມີຈຸດປະສົງທາງດ້ານການຄ້າຂາຍ ບໍ່ຢູ່ໃນລາຍການສິນຄ້າປະເພດເກືອດຫ້າມຂາອອກ-ຂາເຂົ້າ ຫລື ສິນຄ້າທີ່ຢູ່ພາຍໃຕ້ການຄວບຄຸມສະເພາະ ແລະ ຕ້ອງແມ່ນສິນຄ້າທີ່ຜະລິດຢູ່ ສປປ ລາວ ແລະ ຢູ່ ສສ.ຫວຽດນາມ ຕາມມູນຄ່າທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 3 ຂອງອະນຸສັນຍາສະບັບນີ້.

ສຳລັບເຄື່ອງຕ້ອນຂອງຂວັນທີ່ບໍ່ສາມາດແຍກອອກກັນໄດ້ນັ້ນ ພິເສດແມ່ນເຄື່ອງຝາກຂອງຕ້ອນຕາມຮີດຄອງປະເພນີ ເຊິ່ງບໍ່ແມ່ນປະເພດເກືອດຫ້າມ ຂາອອກ-ຂາເຂົ້າ ນັ້ນເຖິງແມ່ນວ່າມູນຄ່າຈະສູງກວ່າຕາມທີ່ກຳນົດໄວ້ ກໍຈະຮັບອະນຸຍາດໃຫ້ຜ່ານປະຕູດ່ານໂດຍບໍ່ຕ້ອງເສັຍພາສີຂາອອກ-ຂາເຂົ້າ.

ສ່ວນສິນຄ້າທີ່ຜະລິດຈາກປະເທດທີສາມ ເມື່ອມີການແລກປ່ຽນຂ້າມຊາຍແດນແມ່ນຕ້ອງປະຕິບັດຕາມລະບຽບກົດໝາຍພາສີຂອງແຕ່ລະປະເທດ.

## ມາດຕາ 3

ມູນຄ່າສິນຄ້າເຄື່ອງຂອງທີ່ເປັນເຄື່ອງຝາກຂອງຕ້ອນ ແລະ ເຄື່ອງຂອງແລກປ່ຽນຂ້າມຊາຍແດນ ແຕ່ລະຖ້ຽວທີ່ຖືກຍົກເວັ້ນພາສີ ຂາອອກ-ຂາເຂົ້າ ແມ່ນບໍ່ໃຫ້ເກີນມູນຄ່າຄິດໄລ່ເປັນເງິນກີບເທົ່າກັບ 45.000 ກີບ ຫລືເປັນເງິນດົງຫວຽດນາມ 500.000 ດົງ ຕໍ່ຄົນໃນນັ້ນອະນຸຍາດຍົກເວັ້ນໃຫ້ພຽງແຕ່ອາທິດລະຄັ້ງເທົ່ານັ້ນ.

ໃນກໍລະນີທີ່ມູນຄ່າສິນຄ້າເຄື່ອງຂອງ ຫາກເກີນຈຳນວນທີ່ໄດ້ກຳນົດໄວ້ຂ້າງເທິງນີ້, ຜູ້ເປັນເຈົ້າຂອງສິນຄ້າເຄື່ອງຂອງຈະຕ້ອງເສັຍຄ່າພາສີ ຂາອອກ-ຂາເຂົ້າ ສຳລັບສ່ວນເກີນແມ່ນປະຕິບັດຕາມລະບຽບກົດໝາຍຂອງພາສີແຕ່ລະປະເທດ.

## *ມາດຕາ 4*

ສິນຄ້າເຄື່ອງຂອງທີ່ແລກປ່ຽນ ແລະເປັນເຄື່ອງຝາກຂອງຕ້ອນຜ່ານປະຕູດ່ານ ຕ້ອງປະຕິບັດຕາມລະບຽບກົດໝາຍພາສີ ແລະ ຜ່ານການກວດກາພະຍາດຕິດແປດຈາກລັດຖະບານທີ່ກ່ຽວຂ້ອງຂອງແຕ່ລະປະເທດຢ່າງຄົບຖ້ວນ.

ພົນລະເມືອງທີ່ຢູ່ຕາມຊາຍແດນ ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງເງິນຕາຕ່າງປະເທດຂອງແຕ່ລະປະເທດຢ່າງຖືກຕ້ອງ ແລະ ເຂັ້ມງວດ.

ໃນແຕ່ລະໄລຍະພາສີທັງສອງຝ່າຍ ຕ້ອງແຈ້ງລາຍການສິນຄ້າຫ້າມອອກ-ຫ້າມເຂົ້າໃຫ້ກັນ ແລະ ກັນຊາບພ້ອມທັງປະກາດໃຫ້ປະຊາຊົນຢູ່ຕາມຊາຍແດນເພື່ອໄດ້ຮັບຮູ້ ແລະ ປະຕິບັດຕາມ.

## *ມາດຕາ 5*

ຄູ່ສັນຍາຕ້ອງມີມາດຕະການອັນເໝາະສົມ ຕາມລະບຽບກົດໝາຍຂອງຝ່າຍຕົນຕໍ່ຜູ້ທີ່ມີການລະເມີດກົດໝາຍພາສີ, ຄ້າຂາຍເຖື່ອນ ຫລື ຂົນສົ່ງສິນຄ້າ, ເງິນກີບຂອງລາວ, ເງິນດົງຂອງຫວຽດນາມ ຫລື ເງິນຕາຕ່າງປະເທດຢ່າງຜິດກົດໝາຍໃນເວລາແລກປ່ຽນສິນຄ້າຕາມຊາຍແດນ.

## *ມາດຕາ 6*

ອະນຸສັນຍາສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນເຖິງສິ້ນ

ປີ 1998 ແລະ ຫລັງຈາກນັ້ນຈະມີຜົນນຳໃຊ້ໄດ້ໄປໃນຕົວຄັ້ງລະໜຶ່ງປີຖ້າວ່າຝ່າຍໃດໜຶ່ງຂອງຄູ່ສັນຍາຫາກບໍ່ແຈ້ງຈຸດປະສົງຢາກລົບລ້າງສັນຍາສະບັບນີ້ ໃຫ້ອີກຝ່າຍນຶ່ງຊາບລ່ວງໜ້າເປັນລາຍລັກອັກສອນສາມເດືອນ ກ່ອນອະນຸສັນຍາຈະສິ້ນກຳນົດ.

ໃນໄລຍະປະຕິບັດອະນຸສັນຍາສະບັບນີ້ ອາດຈະມີການດັດແປງເພີ່ມເຕີມເວລາໃດກໍໄດ້ ຖ້າວ່າຄູ່ສັນຍາຫາກຕົກລົງກັນຢ່າງເປັນລາຍລັກອັກສອນ.

ເຮັດທີ່ ຮ່າໂນຍ ວັນທີ 8 ສິງຫາ (8) 1997 ເປັນສອງສະບັບ, ແຕ່ລະສະບັບເປັນພາສາລາວ ແລະ ພາສາຫວຽດນາມ, ທັງສອງສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

| ຕາງໜ້າລັດຖະບານ<br>ແຫ່ງ ສ.ປ.ປ.ລາວ | ຕາງໜ້າລັດຖະບານ<br>ແຫ່ງ ສສ.ຫວຽດນາມ |
|---|---|
| ຄຳສິງ ໄຊຍະກອນ<br>ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ | ຟານ ວັນ ຢຶງ<br>ຫົວໜ້າສະຫະກົມພາສີ |

BỘ NGOẠI GIAO
-----
Số : 56 /LPQT

SAO Y BẢN CHÍNH
(Để thực hiện)

Hà Nội, ngày 13 tháng 8 năm 1997

TL. BỘ TRƯỞNG BỘ NGOẠI GIAO
KT. Vụ trưởng Vụ Luật pháp và Điều ước quốc tế
Phó Vụ trưởng

(Dấu: BỘ NGOẠI GIAO)

Phạm Hào

Nơi nhận :

- Văn phòng Chính phủ (để b/c),
- Bộ Thương mại,
- Bộ Quốc phòng,
- Tổng cục Hải quan,
- Ban Biên giới của CP,
- ĐSQ Việt Nam tại Lào,
- Vụ châu Á 2,
- Vụ TH Kinh tế,
- Vụ LPQT,
- LT (10b).